# ຂໍ້ແນະນຳສຳຫຼັບການພັດທະນາລະບົບການຄຸ້ມຄອງຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມແບບປະສົມປະສານ (IREM) ໃຫ້ມີປະສິດທິຜົນສູງ

ບົດຮຽນໃນອະດີດ ໄດ້ສາທິດໃຫ້ເຫັນວ່າ ກ່ອນຈະນຳເອົາວິທີການຄຸ້ມຄອງແບບປະສົມປະສານມານຳໃຊ້ ຈະຕ້ອງໄດ້ເອົາໃຈໃສ່ເປັນຢ່າງຍິ່ງຕໍ່ການສ້າງເງື່ອນໄຂອັນຈຳເປັນເພື່ອຮອງຮັບເປັນຢ່າງດີ. ການເຈາະເລິກບັນຫາກ່ຽວກັບ ສິ່ງກີດກັ້ນຕໍ່ການຄຸ້ມຄອງລະບົບນິເວດ ຂອງພວກເຮົາໃນບົດຮຽນກ່ອນ ໄດ້ເຮັດໃຫ້ຮູ້ແຈ້ງເຖິງລັກສະນະພິເສດທາງດ້ານການຄຸ້ມຄອງ ແລະທາງດ້ານສະຖາບັນຫຼາຍຢ່າງ ອັນເປັນສິ່ງຊຸກຍູ້ ແລະ ສະໜັບສະໜູນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ. ລັກສະນະພິເສດທີ່ສຳຄັນລວມມີດັ່ງນີ້:

- ມີພັນທະຕາມກົດໝາຍຕໍ່ວິທີການທາງດ້ານນິເວດ
- ມີໂຄງຮ່າງການຄຸ້ມຄອງແບບກວ້າງຂວາງ ແລະມີການປະສານງານທີ່ດີ
- ມີການພັດທະນານະໂຍບາຍອັນກົມກຽວ
- ມີກົນໄກສະໜັບສະໜູນຕິດຕໍ່ພົບພັນ ແລະແກ້ໄຂບັນຫາທີ່ມີປະສິດທິພາບ

ສ່ວນມາດຕະການທີ່ເປັນອົງປະກອບຍ່ອຍສຳຫຼັບແຕ່ລະເງື່ອນໄຂດັ່ງກ່າວນີ້ ໄດ້ສັງລວມໄວ້ໃນຕາຕະລາງທີ 1 ແລະໄດ້ນຳເອົາໄປສົນທະນາລະອຽດໃນພາກຕໍ່ໄປ.

## ຄວາມຖືກຕ້ອງຕາມກົດໝາຍ

ການເຮັດໃຫ້ເກີດມີຄວາມຖືກຕ້ອງຕາມກົດໝາຍໃນກຸ່ມຜູ້ສົນໃຈ ໜ້າຈະເປັນປັດໃຈຫຼັກສຳຫຼັບການຈັດຕັ້ງປະຕິບັດຍຸດທະສາດແລະນະໂຍບາຍກ່ຽວກັບການຄຸ້ມຄອງແບບປະສົມປະສານໃຫ້ເກີດຜົນໄດ້. ເວົ້າງ່າຍໆໄດ້ວ່າ ຄວາມຖືກຕ້ອງຕາມກົດໝາຍນີ້ ແມ່ນການຍອມຮັບແນວທາງການຄຸ້ມຄອງສິ່ງແວດລ້ອມຂອງທຸກໆພາກສ່ວນໃນສັງຄົມ. ໝາຍຄວາມວ່າ ອົງກອນຄຸ້ມຄອງທີ່ກ່ຽວຂ້ອງ, ຜູ້ມີສ່ວນຮ່ວມຕ່າງໆ ແລະ ສັງຄົມທົ່ວໄປຕ້ອງໄດ້ຊາບຊຶ້ມ ແລະມີພັນທະຢ່າງພຽງພໍ. ນອກຈາກນັ້ນ, ມັນຍັງຮຽກຮ້ອງໃຫ້ມີການຊຸກຍູ້ທາງດ້ານການເມືອງອີກດ້ວຍ.

ເຖິງວ່າ ຈະມີຄວາມຫຍຸ້ງຍາກໃນການວັດແທກໂດຍກົງໄດ້, ແຕ່ພັນທະທາງດ້ານການເມືອງ ແລະການຄຸ້ມຄອງກໍສາມາດວັດແທກໄດ້ດ້ວຍຕົວວັດແທກຫຼາຍຢ່າງ. ໃນນີ້, ຄວາມເຂັ້ມແຂງໃນການນຳພາ ເປັນໜຶ່ງໃນຈຳນວນຕົວວັດແທກດັ່ງກ່າວ. ແນວຄວາມຄິດທີ່ຢາກຈະປັບປຸງຄຸນະພາບທາງດ້ານສິ່ງແວດລ້ອມ ໄປຄຽງຄູ່ກັບການພັດທະນາສັງຄົມ ດັ່ງທີ່ມັກເວົ້າເຖິງຢູ່ໃນປະຈຸບັນ ມັກຈະກາຍເປັນຈຸດປະສົງສອງຢ່າງທີ່ຂັດກັນ ບໍ່ວ່າຢູ່ໃນປະເທດກຳລັງພັດທະນາ ກໍຄື ໃນປະເທດທີ່ມີການພັດທະນາແລ້ວກໍຕາມ. ຍິ່ງໄປກວ່ານັ້ນ, ການນຳພາທີ່ມີປະສິດທິຜົນ ຍັງຮຽກຮ້ອງໃຫ້ມີ ການຍອມຮັບຄວາມຈິງ ວ່າມີຂໍ້ຈຳກັດທາງດ້ານນິເວດ ແລະ ການມີຄວາມຮັບຜິດຊອບໃນການຕັດສິນໃຈອັນແນ່ວແນ່ ຢູ່ໃນສະພາບທີ່ມີທາງເລືອກມີຄວາມຫຍຸ້ງຍາກສັບສົນນີ້. ດັ່ງນັ້ນ, ຕົວແທນຂອງນັກການເມືອງ ຫຼື ອົງການປົກຄອງ ຕ້ອງໄດ້ມີຄວາມຮັບຜິດຊອບເພີ່ມຂຶ້ນ ແທນທີ່ພຽງແຕ່ກ່າວວ່າ ການພັດທະນາທາງດ້ານສິ່ງແວດລ້ອມ ແລະສັງຄົມ ເປັນວັດຖຸປະສົງທີ່ສຳຄັນລ້າໆ. ການນຳພາອັນເຂັ້ມແຂງຂອງລັດຖະບານ (ບໍ່ວ່າໃນລະດັບການເມືອງ ກໍຄືໃນລະດັບບໍລິຫານ) ຕ້ອງຮັບຮູ້ຄວາມເປັນຈິງຂອງຄວາມຫຍຸ້ງ



**ຕາຕະລາງທີ 1: ຂໍ້ແນະນໍາທາງດ້ານສະຖາບັນ ແລະ ມາດຕະການສໍາຫຼັບຕີລາຄາ ສໍາຫຼັບ IREM**

| ຂໍ້ແນະນໍາ | ມາດຕະການ |
|---|---|
| ຄວາມຖືກຕ້ອງຕາມກົດໝາຍ | ພັນທະຂອງນັກການເມືອງ ແລະນັກບໍລິຫານ<br>ການຊຸກຍູ້ຈາກສັງຄົມ |
| ການມີສ່ວນຮ່ວມຢ່າງກວ້າງຂວາງ | ມີການປະສານສົມທົບປະສານງານພາຍໃນທີ່ດີ |
| ມີການປະສານງານທີ່ມີປະສິດທິຜົນ | ມີການປະສານງານທີ່ດີກັບພາຍນອກ<br>ມີການປະສົມປະສານລະຫວ່າງຫຼາຍຂະແໜງວິຊາ<br>ມີການເຂົ້າຮ່ວມຂອງຊຸມຊົນ |
| ສ້າງນະໂຍບາຍທີ່ມີຄວາມກົມກຽວ | ກໍານົດນິຍາມຂອງບັນຫາຮ່ວມກັນ<br>ກໍານົດເປົ້າໝາຍຮ່ວມກັນ<br>ພັກດັນໃຫ້ມີ ການຄຸ້ມຄອງລະບົບນິເວດທີ່ດີ |

ຍາກໃນການປະນີປະນອມບັນຫາ. ການປະປ່ອຍໃຫ້ຜົນກະທົບອັນບໍ່ດີເຂົ້າມາເຖິງຊັບພະຍາກອນທໍາມະຊາດເປັນສ່ວນນຶ່ງຂອງການຕັດສິນໃຈແບບຄຸມເຄືອ.

ຂີດຂັ້ນຂອງຄວາມສອດຄ່ອງກັນລະຫວ່າງ ຄວາມມຸ້ງຫວັງຂອງນັກບໍລິຫານ ແລະ ການຄຸ້ມຄອງລະບົບນິເວດເປັນມາດຕະການອັນທີສອງຂອງການມີພັນທະ. ຄວາມກົດດັນແບບເດີມທີ່ຝັງຢູ່ໃນນະໂຍບາຍກ່ຽວກັບສິ່ງແວດລ້ອມອັນມຸ້ງຫວັງໃສ່ແຕ່ຜົນປະໂຫຍດໄລຍະສັ້ນ ສ່ວນໃຫຍ່ຈະບໍ່ສອດຄ່ອງກັບ ລັກສະນະພິເສດ ຂອງການຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະສິ່ງແວດລ້ອມແບບປະສົມປະສານ.

ມີສອງຢ່າງທີ່ໄດ້ຖືກມອງຂ້າມ ຢ່າງຊັດເຈນທີ່ສຸດ ຄືຄວາມຮຽກຮ້ອງຕ້ອງການທາງດ້ານນິເວດ ແລະ ຄວາມຈໍາເປັນຂອງຄົນຮຸ່ນຕໍ່ໄປ. ນອກນັ້ນ, ຄວາມມຸ້ງຫວັງແບບເດີມ ຍັງບໍ່ທັນໄດ້ໃຫ້ຄຸນຄ່າພຽງພໍຕໍ່ປັດໃຈສໍາຄັນສອງຢ່າງ ເຊັ່ນ: ການປະສານງານ ແລະ ການສື່ສານອັນເປັນຕົວນໍາໄປສູ່ການຄຸ້ມຄອງລະບົບນິເວດດ້ວຍສາຍຕາອັນກວ້າງໄກ. ຕົວຊີ້ບອກເພີ່ມເຕີມ ອີກຢ່າງນຶ່ງທີ່ສາມາດບົ່ງບອກໃຫ້ເຫັນເຖິງພັນທະຂອງນັກການເມືອງແລະນັກບໍລິຫານ ກໍຄື ຄວາມພໍພຽງຂອງການຈັດແບ່ງງົບປະມານ ແລະຊັບພະຍາກອນບຸກຄົນ, ໂດຍສະເພາະໃນຊ່ວງທີ່ ຖານະທາງດ້ານການເງິນບໍ່ມີຄວາມແນ່ນອນ.

ນອກຈາກນັ້ນ, ຄວາມຖືກຕ້ອງທາງດ້ານກົດໝາຍ ຍັງຮຽກຮ້ອງໃຫ້ມີການຊຸກຍູ້ຈາກສັງຄົມທົ່ວໄປອີກດ້ວຍ. ຮູບແບບຂອງການຄຸ້ມຄອງແບບເດີມ ໄດ້ມີຂໍ້ສັນນິຖານໂດຍລວມໄວ້ວ່າ ຄວາມຖືກຕ້ອງທາງດ້ານວິທະຍາສາດອັນຈະແຈ້ງຢ່າງດຽວ ກໍສາມາດຈະນໍາມາໃຊ້ເປັນພື້ນຖານສໍາຫຼັບແຜນງານການຄຸ້ມຄອງໄດ້. ແຕ່ເນື່ອງຈາກວ່າ ເປົ້າໝາຍຂອງການຄຸ້ມຄອງສ່ວນໃຫຍ່ຈະມີການຕິດພັນກັບດ້ານສັງຄົມ ແລະກວມເອົາຄວາມຫຍຸ້ງຍາກໃນການຕັດສິນໃຈ, ດັ່ງນັ້ນ ການຄຸ້ມຄອງຊັບພະຍາກອນທີ່ມີຄວາມຄືບໜ້າ ຈະຮຽກຮ້ອງໃຫ້ມີການຊຸກຍູ້ຢ່າງພຽງພໍ ຈາກສັງຄົມທົ່ວໄປ. ສິ່ງທີ່ກ່າວມານີ້ ແມ່ນເລື່ອງຈິງ ໂດຍທີ່ບໍ່ມີປັດສະຍາຂອງການຄຸ້ມຄອງມາກ່ຽວຂ້ອງແຕ່ຢ່າງໃດ.

ໃນແບບແຜນການຄຸ້ມຄອງສິ່ງແວດລ້ອມແບບເດີມ, ການປະສານສົມທົບກັບສັງຄົມ ມັກຈະເກີດມີໃນຂັ້ນຕອນສຸດທ້າຍຂອງການວາງແຜນ ພາຍຫຼັງການກຳນົດຍຸດທະສາດການດຳເນີນງານອັນລະອຽດແລ້ວ. ແຕ່ຮູບແບບການຄຸ້ມຄອງສິ່ງແວດລ້ອມດ້ວຍສາຍຕາອັນກວ້າງໄກ ຈະລວມເອົາຄຳຄິດຄຳເຫັນຂອງສັງຄົມເຂົ້າໃນແຕ່ລະຂັ້ນຕອນຂອງການຕັດສິນໃຈ ໃນການຄຸ້ມຄອງຊັບພະຍາກອນ. ເຖິງວ່າຈະມີການກຳນົດແຜນການຄຸ້ມຄອງທີ່ເຫັນວ່າເປັນທີ່ເໝາະສົມທີ່ສຸດແລ້ວກໍຕາມ, ແຕ່ ມັນຈະບໍ່ເກີດຜົນດີແຕ່ຢ່າງໃດ ໃນເມື່ອຍັງມີຄວາມບໍ່ເປັນເອກະພາບທາງດ້ານຈະລິຍະທຳກ່ຽວກັບການຄຸ້ມຄອງຢູ່. ຖ້າເປັນເຊັ່ນນັ້ນ, ນັກຄຸ້ມຄອງສິ່ງແວດລ້ອມ ມີຄວາມຈຳເປັນຕ້ອງໄດ້ ທວນກັບໄປອີກກ້າວນຶ່ງ ແລະໃຫ້ຮັບປະກັນໄດ້ວ່າ ວິທີການທີ່ຈະນຳເອົາມາໃຊ້ເຂົ້າໃນການຄຸ້ມຄອງດັ່ງກ່າວ ໄດ້ຮັບການສະໜັບສະໜູນ ຈາກສັງຄົມເປັນຢ່າງດີ.

## ການມີສ່ວນຮ່ວມຢ່າງກວ້າງຂວາງ/ການປະສານງານຢ່າງມີປະສິດທິພາບສູງ

ການມີສ່ວນຮ່ວມຂອງທຸກພາກສ່ວນທີ່ກ່ຽວຂ້ອງ ເປັນເງື່ອນໄຂສຳຄັນທີສອງ ສຳຫຼັບການຈັດຕັ້ງປະຕິບັດການຄຸ້ມຄອງແບບປະສົມປະສານ. ຢາກເຮັດໃຫ້ການຄຸ້ມຄອງມີມຸມມອງອັນກວ້າງໄກ ແລະ ມີລັກສະນະອັນດີທາງດ້ານນິເວດ ມັນຮຽກຮ້ອງໃຫ້ມີການປະສົມປະສານຂອງທີມງານຈາກຫຼາຍສາຂາວິຊາ ຈາກຫຼາຍອົງການທີ່ກ່ຽວຂ້ອງກັບການຄຸ້ມຄອງສິ່ງແວດລ້ອມ. ໂດຍສະເພາະ, ການມີສ່ວນຮ່ວມຄວນຂະຫຍາຍອອກຢູ່ເບື້ອງຫຼັງຂອງອົງການຄຸ້ມຄອງເດີມ ທີ່ມີມຸມມອງທາງດ້ານວິທະຍາສາດທຳມະຊາດອັນພົ້ນເດັ່ນ. ນອກຈາກນັ້ນ, ຄວນນຳເອົາອົງການຕ່າງໆທາງດ້ານສັງຄົມອື່ນໆ (ເຊັ່ນ: ອົງການສາທາລະນະສຸກ) ເຂົ້າມາມີສ່ວນຮ່ວມ ເພື່ອ ຊັກຈູງເອົາມຸມມອງເດີມໄປສູ່ບາງດ້ານທີ່ມີຄວາມສຳຄັນ ເຊັ່ນ: ການວາງແຜນຊຸມຊົນ, ຄວາມສະເໝີພາບຂອງສັງຄົມ, ວັດທະນາທຳ-ສັງຄົມ ແລະ ການພັດທະນາມໍຣະດົກ ແລະ ການພັດທະຍາທຸລະກິດ ເປັນຕົ້ນ. ຄວາມໜັກແໜ້ນຂອງການລວມຕົວກັນນີ້ ຮຽກຮ້ອງໃຫ້ມີການສື່ສານອັນດີ ພາຍໃນບັນດາອົງການຄຸ້ມຄອງທີ່ກ່ຽວຂ້ອງ. ແຕ່ສາຍການພົວພັນ ຈະຕ້ອງມີການຂະຫຍາຍຢູ່ເບື້ອງຫຼັງຂອງຫ້ອງການຂອງລັດ. ການປະສານສົມທົບກັນລະຫວ່າງ ການຄົ້ນຄ້ວາ, ການວາງແຜນ ແລະ ການຄຸ້ມຄອງ ໝາຍເຖິງ ການປະສານງານລະຫວ່າງອົງການພາຍໃນ, ແຕ່ກໍຄວນຈະມີການປະສານງານກັບ ນັກຄົ້ນຄ້ວາ ແລະ ຜູ້ມີປະສົບການຈາກຂ້າງນອກອີກດ້ວຍ.

ນອກຈາກນີ້, ການມີສ່ວນຮ່ວມຢ່າງກວ້າງຂວາງ ຍັງມີຄວາມໝາຍວ່າ ການເຂົ້າຮ່ວມຂອງສັງຄົມ ແລະ ຜູ້ມີສ່ວນຮ່ວມອື່ນໆອີກດ້ວຍ. ດັ່ງທີ່ໄດ້ກ່າວໄວ້ແລ້ວວ່າ: ຄວາມເຫັນດີເຫັນພ້ອມຈາກຊຸມຊົນ ເປັນສິ່ງຈຳເປັນໃນການກຳນົດການຄຸ້ມຄອງແບບປະສົມປະສານໃຫ້ມີຄວາມຖືກຕ້ອງເໝາະສົມ ແລະ ທັງຮັບປະກັນເຮັດໃຫ້ຍຸດທະສາດ ທີ່ຈະສະເໜີສ້າງຂຶ້ນນັ້ນ ສະທ້ອນໃຫ້ເຫັນເຖິງຄຸນຄ່າ ແລະບຸລິມະສິດຂອງທ້ອງຖິ່ນເຂົ້ານຳດ້ວຍ. ຢາກເຮັດໃຫ້ວິທີການຄຸ້ມຄອງເປັນແບບໂຕ້ຕອບທັນການ (proactive) ອັນເປັນທີ່ປາດຖະໜາ ແລະສາມາດແກ້ບັນຫາກ່ຽວກັບ ຜົນກະທົບທີ່ເກີດຈາກກຳນົດໝາຍດ້ານເຕັກນິກ ຕໍ່ທ້ອງຖິ່ນໄດ້ ຜູ້ຄຸ້ມຄອງຈະຕ້ອງໄດ້ສັງລວມເອົາຄວາມຄິດຄວາມເຫັນຈາກທ້ອງຖິ່ນໃຫ້ພຽງພໍ. ນອກຈາກນັ້ນ, ການເຂົ້າຮ່ວມຂອງຊຸມຊົນຍັງມີຄວາມສຳຄັນເພາະວ່າ ມັນເປັນບ່ອນສະແດງອອກໃຫ້ເຫັນເຖິງມຸມມອງແລະ ຄຸນຄ່າ ອັນກວ້າງໄກ ອັນຊ່ວຍເຮັດໃຫ້ມີຄວາມສາມາດເຂົ້າໃຈບັນຫາສຳຄັນໄດ້ດີກວ່າ. ຍິ່ງໄປກວ່ານັ້ນ, ການເຂົ້າຮ່ວມຂອງປະຊາຊົນທ້ອງຖິ່ນ ຍັງເປັນການຂະຫຍາຍຂໍ້ມູນຂ່າວສານ ບໍ່ວ່າທາງດ້ານປະລິມານ ກໍຄື ທາງດ້ານຄວາມຫຼາກຫຼາຍ ໃຫ້ແກ່ການຕັດສິນໃຈຂອງນັກການເມືອງໄດ້, ອັນມີຜົນຕໍ່ເນື່ອງເຮັດໃຫ້ສາມາດແກ້ໄຂບັນຫາທີ່ມີຄວາມສັບສົນ ແລະ ສາມາດຊອກຫາວິທີການແກ້ບັນຫາທີ່ມີປະສິດທິຜົນໄດ້ດີກວ່າ.

## ການສ້າງຍຸດທະສາດທີ່ມີຄວາມກົມກຽວ

ເງື່ອນໄຂທີສາມຂອງການຄຸ້ມຄອງແບບປະສົມປະສານ ແມ່ນການສ້າງພື້ນຖານຄວາມເປັນເອກະພາບສຳລັບ ການຕັດສິນໃຈ. ໃນນີ້, ຄວນຈະເນັ້ນໃສ່ການກຳນົດນິ ຍາມຂອງບັນຫາຮ່ວມກັນລະຫວ່າງພາກສ່ວນທີ່ມີສ່ວນ ຮ່ວມທັງໝົດ.

ນິຍາມຂອງບັນຫາທີ່ສ້າງຂຶ້ນຮ່ວມກັນນີ້ ສາມາດນຳເອົາ ໄປໃຊ້ໃນການກຳນົດວັດຖຸປະສົງຂອງການຄຸ້ມຄອງແບບ ລວມໝູ່ ແລະ ໃນການກຳນົດສ້າງນະໂຍບາຍ ເພື່ອ ຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການທາງດ້ານນິ ເວດ. ໂດຍສະເພາະແລ້ວ, ຈະຕ້ອງໄດ້ເອົາໃຈໃສ່ເປັນພິ ເສດຕໍ່ການແກ້ໄຂບັນຫາຂອງຄວາມບໍ່ແນ່ນອນ ແລະຮັບ ປະກັນໃຫ້ໄດ້ວ່າ ບັນດາຊ່ອງຫວ່າງຂອງຄວາມຮູ້ດ້ານ ວິ ທະຍາສາດ, ດ້ານເສດຖະກິດ ແລະດ້ານສັງຄົມ ໄດ້ຮັບ ການແກ້ໄຂ.

ສ່ວນນິຍາມຂອງການຄຸ້ມຄອງແບບປະສົມປະສານ ທີ່ ສ້າງຂຶ້ນຮ່ວມກັນຂອງຜູ້ມີສ່ວນຮ່ວມທັງໝົດ ແຕ່ບໍ່ມີ ຄວາມແຈ່ມແຈ້ງ ຊັດເຈນ ກໍບໍ່ຄວນກີດກັ້ນການນຳໃຊ້ ຂອງພວກມັນຢູ່ໃນວຽກງານການຄຸ້ມຄອງ. ແນວຄວາມ ຄິດທີ່ມີລັກສະນະລອຍໆ ເຊັ່ນ ກ່ຽວກັບ ສຸຂະພາບ, ມະນຸດສະທຳ ແລະ ການສຶກສາ ເປັນສິ່ງນຳທາງໃຫ້ແກ່ ຫຼາຍໆສາຂາອາຊີບ. ແຕ່ສິ່ງທີ່ຈຳເປັນທີ່ສຸດ ສຳຫຼັບນັກ ຄຸ້ມຄອງສິ່ງແວດລ້ອມ ກໍຄືການຍອມຮັບ ຄວາມເຂົ້າໃຈ ນິຍາມທີ່ແຕກຕ່າງກັນພາຍໃນ ແລະ ລະຫວ່າງນັກຄຸ້ມ ຄອງສິ່ງແວດລ້ອມກັບສັງຄົມທົ່ວໄປ ແລະຈະຕ້ອງໄດ້ ເຮັດວຽກຮ່ວມກັນ ເພື່ອສ້າງຄວາມເຂົ້າໃຈຄຳສັບ/ສຳ ນວນ ທີ່ເຫັນວ່າເໝາະສົມແກ່ເຂດແຄ້ວນ ແລະຈຸດສຸມ ຂອງຕົນ. ແທນທີ່ຈະເສັຽເວລາກັບການໂຕ້ຖຽງກັນກ່ຽວ ກັບນິຍາມ, ຜູ້ຄຸ້ມຄອງຄວນຈະສຸມໃສ່ການສ້າງຄວາມ ເປັນເອກະພາບກັນໃນດ້ານຫຼັກການລວມຂອງການຄຸ້ມ ຄອງສິ່ງແວດລ້ອມທີ່ດີ. ນັກຄຸ້ມຄອງສິ່ງແວດລ້ອມຍັງ ຕ້ອງໄດ້ເປີດການສົນທະນາເຫດຜົນທີ່ກ່ຽວຂ້ອງກັບການ ສະເໜີຂອງຕົນ ແບບເປີດກ້ວາງແລະສາທິດໃຫ້ເຫັນເຖິງ ພາບພົດ ວ່າກິດຈະກຳທີ່ສະເໜີນັ້ນ ໄດ້ສະທ້ອນໃຫ້ເຫັນ ເຖິງການຄຸ້ມຄອງລະບົບນິເວດຄືແນວໃດ. ຍຸດທະສາດ ຂອງການຄຸ້ມຄອງທີ່ນຳສະເໜີ ບໍ່ຈຳເປັນຕ້ອງລວມເອົາ ບັນດາອົງປະກອບທັງໝົດຂອງການຄຸ້ມຄອງແບບປະສົມ ປະສານທັງໝົດກໍໄດ້, ແຕ່ຕ້ອງໄດ້ພິຈາລະນາແຕ່ລະອົງ ປະກອບຢ່າງຖີ່ຖ້ວນ ແລະມີມາດຕະການເຜີຍແຜ່ຕໍ່ສັງ ຄົມເປັນລາຍລັກອັກສອນ. ວິທີການທີ່ກ່າວນີ້ ຈະສາ ມາດເພີ່ມຄວາມຮັບຜິດຊອບໃນການຄຸ້ມຄອງໄດ້ເປັນ ຢ່າງດີ.

## ການສື່ສານທີ່ມີປະສິດທິຜົນ

ການສື່ສານທີ່ມີປະສິດທິຜົນເປັນອົງປະກອບທີສີ່ ທີ່ມີ ຄວາມຈຳເປັນສຳຫຼັບການຈັດຕັ້ງປະຕິບັດການຄຸ້ມຄອງ ແບບປະສົມປະສານ. ໃນນີ້, ການແລກປ່ຽນຄວາມຄິດ ຄວາມເຫັນ ແລະຂໍ້ມູນຂ່າວສານ ເຊິ່ງກັນແລະກັນ ເປັນ ປັດໃຈທີ່ມີຄວາມສຳຄັນ ທີ່ຈຳນຳໄປສູ່ການຄຸ້ມຄອງແບບ ປະສົມປະສານທີ່ມີປະສິດທິຜົນສູງ. ແຕ່ສ່ວນໃຫຍ່ ຈະບໍ່ ໄດ້ເປີດໂອກາດໃຫ້ມີການສື່ສານແບບເປີດກວ້າງໄດ້. ລະບົບການສື່ສານທີ່ດີເປັນສິ່ງຈຳເປັນ ໃນການຮັບປະ ກັນເຮັດໃຫ້ການແລກປ່ຽນຂໍ້ມູນ ໃນຖັນແຖວອົງກອນທີ່ ກ່ຽວຂ້ອງຂອງລັດ ກໍຄືພາກສ່ວນທີ່ກ່ຽວຂ້ອງອື່ນ ໃຫ້ມີຂໍ້ ມູນໃນປະລິມານທີ່ພຽງພໍ ແລະທັນການໄດ້. ດັ່ງນັ້ນ ອົງ ກອນທີ່ກ່ຽວຂ້ອງ ຕ້ອງໄດ້ສ້າງກົນໄກ ແລະປັບປຸງກົນໄກ ສຳຫຼັບການແລກປ່ຽນຂໍ້ມູນແບບບໍ່ເປັນທາງການ ແລະ ຊຸກຍູ້ໃຫ້ເກີດມີການແລກປ່ຽນຂໍ້ມູນກັນແບບເສລີ.

ນອກຈາກນັ້ນ, ຄວາມຂັດແຍ່ງ ເປັນອຸປະສັກທີ່ສຳຄັນ ຢ່າງນຶ່ງໃນການຄຸ້ມຄອງແບບປະສົມປະສານ. ຂໍ້ຂັດແຍ່ງ ມັກຈະເກີດຂຶ້ນ ຈາກການມອງການຜິດພາດ ຍ້ອນມີຂໍ້ ມູນບໍ່ພຽງພໍ ຫຼື ເກີດຈາກຄວາມບໍ່ສອດຄ່ອງໃນນະໂຍ ບາຍ ແລະໃນວັດຖຸປະສົງຂອງບັນດາອົງກອນ ແລະ ແຜນງານທີ່ກ່ຽວຂ້ອງກັບການຄຸ້ມຄອງແບບນີ້. ເພື່ອຫຼີກ ລ່ຽງບັນຫາດັ່ງກ່າວ, ນັກຄຸ້ມຄອງສິ່ງແວດລ້ອມ ແລະ ນັກການເມືອງ ຕ້ອງໄດ້ຫັນໜ້າເຂົ້າກັນມາປຶກສາຫາລື

ກັນໃນທັນທີທັນໃດ ແລະພ້ອມກັນຊອກຫາທາງອອກ ຮ່ວມກັນຢ່າງເປັນຂະບວນການ.

ໃນການຫັນໜ້າເຂົ້າແກ້ບັນຫາຮ່ວມກັນນີ້, ອີງກອນການຄຸ້ມຄອງ ຕ້ອງໄດ້ເຂົ້າໃຈຮ່ວມກັນວ່າ ຈະແກ້ບັນຫາຂອງຄວາມບໍ່ແນ່ນອນທາງດ້ານວິທະຍາສາດໄດ້ຄືແນວໃດ. ໃນຄວາມເປັນຈິງ, ມັກຈະມີການໂຕ້ຖຽງກັນຢູ່ເລື້ອຍໆວ່າ ມັນຈະເກີດມີຜົນກະທົບອັນຮ້າຍແຮງຕໍ່ສິ່ງແວດລ້ອມແທ້ຫຼືບໍ່. ແຕ່ຈຸດຢືນສ່ວນໃຫຍ່ໃນປະຈຸບັນຂ້ອນຂ້າງຈະສະໜັບສະໜູນການຢືນຢັນວ່າ ຜົນກະທົບອັນຮ້າຍແຮງທາງດ້ານສິ່ງແວດລ້ອມເປັນການກ່າວຫາທີ່ບໍ່ມີຫຼັກຖານອ້າງອີງທາງດ້ານວິທະຍາສາດອັນໜັກແໜ້ນ ທີ່ຈະນຳໄປສູ່ການປ່ຽນແປງທາງດ້ານນະໂຍບາຍໄດ້. ແຕ່ເຖິງແນວໃດກໍຕາມ, ຄຳວ່າ ບໍ່ມີຫຼັກຖານທາງດ້ານວິທະຍາສາດພຽງພໍ ກໍບໍ່ໄດ້ໝາຍຄວາມວ່າ ຈະບໍ່ເກີດມີຜົນກະທົບຫຍັງຕໍ່ສິ່ງແວດລ້ອມ. ໃນບາງກໍລະນີ, ການຄົ້ນຄ້ວາ ມັກຈະມີແບບຈຳກັດ ຫຼືບໍ່ມີການຄົ້ນຄ້ວາດ້ວຍຊ້ຳໄປ, ອັນສິ່ງຜົນໃຫ້ນັກຄຸ້ມຄອງສິ່ງແວດລ້ອມມີຄວາມຕ້ານທານຕໍ່ການປ່ຽນແປງ. ດັ່ງນັ້ນ, ມັນເປັນເລື່ອງທີ່ສຳຄັນ ທີ່ບໍ່ຄວນນຳເອົາຄຳວ່າ ມີຄວາມລະມັດລະວັງ ຫຼື ມີຄວາມເປັນຫ່ວງເປັນໃຍ ມາເປັນຂໍ້ອ້າງສຳຫຼັບການດຳເນີນການ ແລະບໍ່ຄວນຈະໃຫ້ມີແຜນງານເກີດຂຶ້ນ ໃນເມື່ອສະພາບແລະເງື່ອນໄຂມີການປ່ຽນແປງ ແລະພາຍຫຼັງທີ່ຮູ້ຈັກເຫດການດີແລ້ວ.

ຖ້າເປັນເຊັ່ນນີ້, ມັນມີຄວາມຈຳເປັນສຳຫຼັບຜູ້ຄຸ້ມຄອງຈະຕ້ອງໄດ້ຮັບຮູ້ ວ່າຄວາມບໍ່ແນ່ນອນ ແມ່ນຕົ້ນເຫດຂອງຄວາມບໍ່ເປັນເອກະພາບ. ໃນເວລາດຽວກັນ, ຜູ້ຄຸ້ມຄອງຕ້ອງໄດ້ແບ່ງເບົາບັນຫາກັບຜູ້ອື່ນໆ ແລະ ເອົາໃຈໃສ່ຕໍ່ການຕອບສະໜອງຂໍ້ມູນໃຫ້ພຽງພໍກັບຄວາມຕ້ອງການ.